**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214001
ແຟັກ: 021 213495

ເລກທີ 5537 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 09 JUN 2023

# ໜັງສືແຈ້ງການ

ເຖິງ: ຜູ້ອຳນວຍການ ໂຮງງານຜະລິດ, ບໍລິສັດຂາອອກ-ຂາເຂົ້າ, ບໍລິສັດຂາຍຍົກ ດ້ານຢາ ແລະ ຜະລິດຕະພັນການແພດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເຂົ້າຮ່ວມເປັນສະມາຊິກ ສະມາຄົມທຸລະກິດ ການຢາ ແລະ ຜະລິດຕະພັນການແພດ ຂອງ ສປປ ລາວ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໃນການກະກຽມການສ້າງຕັ້ງ ຄະນະສະມາຄົມທຸລະກິດດ້ານຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 3837/ສທ. ລົງວັນທີ 16/12/2021.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການດຳເນີນທຸລະກິດ ດ້ານຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 1820/ສທ. ລົງວັນທີ 25/08/2017.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດເປີດກອງປະຊຸມໃຫຍ່ປັບປຸງຄະນະບໍລິຫານຂອງສະມາຄົມທຸລະກິດການຢາ ແລະ ຜະລິດຕະພັນການແພດ ຂອງ ສປປ ລາວ ສະບັບເລກທີ 0036/ກຄພນ, ລົງວັນທີ 12/01/2023.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາຂໍ້ຕົກລົງ ສະບັບດັ່ງກ່າວໃຫ້ປະກົດຜົນເປັນຈິງ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການເຄື່ອນໄຫວ ທຸລະກິດດ້ານຢາ ແລະ ຜະລິດຕະພັນການແພດ ຂອງ ສ ປປ ລາວ ຮັບປະກັນໄດ້ໃນການສະໜອງ ຢາ ແລະ ຜະລິດຕະພັນການແພດ ໃຫ້ແກ່ສັງຄົມ ດ້ວຍຄວາມຮັບຜິດຊອບ, ເປັນເຈົ້າການ ແລະ ຮັບປະກັນທາງດ້ານ ປະລິມານ, ຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ພິຈາລະນາ ແລະ ປະສານກັບຜູ້ປະສານງານກ່ຽວຂ້ອງ ໃນການສະໝັກ ເຂົ້າເປັນສະມາຊິກສະມາຄົມທຸລະກິດ ການຢາ ແລະ ຜະລິດຕະພັນການແພດ ຂອງ ສປປ ລາວ.

ໃນປະຈຸບັນ ສະມາຄົມດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນ, ມີການປັບປຸງ ແລະ ແຕ່ງຕັ້ງຄະນະບໍລິຫານກ່ຽວຂ້ອງ. ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະມາຄົມໄດ້ຮັບປະສິດທິຜົນຕາມຄາດໝາຍ. ໃນເວລາອັນໃກ້ນີ້ ຈະໄດ້ເປີດກອງປະຊຸມໃຫຍ່ ຂອງສະມາຄົມ ສະນັ້ນ ເພື່ອກະກຽມໃຫ້ແກ່ການເປີດກອງປະຊຸມດັ່ງກ່າວ ແລະ ວາງທິດທາງແຜນການເຄື່ອນໄຫວຂອງສະມາຄົມ ໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍ ຈຶ່ງຮຽກຮ້ອງມາຍັງ ຜູ້ປະກອບການ ດ້ານຢາ ແລະ ຜະລິດຕະພັນການແພດ ຂອງ ສປປ ລາວ ມີຄວາມຕື່ນຕົວ ແລະ ສະໝັກ ເຂົ້າເປັນສະມາຊິກ ສະມາຄົມ ທຸລະກິດການຢາ ແລະ ຜະລິດຕະພັນການແພດ ຂອງ ສປປ ລາວ.

ລາຍລະອຽດ ກ່ຽວກັບວິທີການ, ຂັ້ນຕອນ ແລະ ແບບຟອມ ໃນການສະໝັກ ໄດ້ຄັດຕິດມາພ້ອມນີ້ ຫຼືວ່າ ທ່ານສາມາດ ເຂົ້າເບິ່ງ ແລະ ຮັບແບບຟອມສະໝັກໃນ ເວັບໄຊ໌ ຂອງກົມອາຫານ ແລະ ຢາ www.fdd.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບັນດາທ່ານເພື່ອຊາບ, ຫວັງຢ່າງຫຍິ່ງວ່າ ຈະໄດ້ຮັບຄວາມຮ່ວມມືຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ປອ. ດຣ. ບຸນຂູ ແກ້ວຫາວົງ

ຕິດຕໍ່ພົວພັນ:

- ພກ. ນ. ລັດສະມີ ໄຊຍະເສນ ໂທ: 020 54426324
- ພກ. ນ. ສຸດທິດາ ວົງສະຫວັດ ໂທ: 020 54456698

ສະມາຄົມ ທຸລະກິດການຢາ
ແລະ ຜະລິດຕະພັນການແພດ

ເລກທີ:................./ສທຢພ

# ແບບຟອມສະໝັກເຂົ້າເປັນສະມາຊິກ

ສະມາຄົມ ທຸລະກິດການຢາ ແລະ ຜະລິດຕະພັນການແພດ ແມ່ນການຈັດຕັ້ງທາງສັງຄົມຂອງກຸ່ມທຸລະກິດທີ່ປະກອບອາຊີບທຸລະກິດທາງດ້ານການຢາ ແລະ ຜະລິດຕະພັນ ທາງການແພດ, ມີຄວາມເປັນເອກະລາດທາງການຈັດຕັ້ງ ໂດຍມີພາລະບົດບາດ ໃນການຊ່ວຍເຫຼືອຊຸກຍູ້, ປົກປ້ອງ ແລະ ອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງສະມາຄົມ ໃຫ້ສາມາດດຳເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍທີ່ທາງພາກລັດວາງອອກທຸກປະການ.

## ຂໍ້ມູນວິສາຫະກິດ

| | | | | | |
|---|---|---|---|---|---|
| ຊື່ວິສາຫະກິດ (ພາສາລາວ): | | | | | |
| ຊື່ວິສາຫະກິດ (ພາສາອັງກິດ): | | | | | |
| ຊື່ ແລະ ນາມສະກຸນ ເຈົ້າຂອງ (ພາສາລາວ): | | | | | |
| ຊື່ ແລະ ນາມສະກຸນ ເຈົ້າຂອງ (ພາສາອັງກິດ): | | | | | |
| ອາຍຸ: | | ວັນເດືອນປີເກີດ: | | ສັນຊາດ: | |
| ຕຳແໜ່ງ (ພາສາລາວ): | | ຕຳແໜ່ງ (ພາສາອັງກິດ): | | | |
| ເບີມືຖືຂອງທ່ານ: | | ຈຳນວນພະນັກງານທັງໝົດ: | | ຍິງ: | |
| ວັນເດືອນປີສ້າງຕັ້ງທຸລະກິດ: | | | | | |
| ຮ່ວມທຶນກັບປະເທດ: | | | | | |
| ຊື່ຜູ້ປະສານງານ: | | ເບີໂທ ແລະ ວັອດແອັບ: | | | |
| ທີ່ຕັ້ງສຳນັກງານ ຖະໜົນ: | | | | | |
| ບ້ານ: | | ເມືອງ: | | ແຂວງ: | |
| ເບີໂທຫ້ອງການ: | | ເບີແຟັກ: | | ຕູ້ ປ.ນ: | |
| ອີເມວຫລັກ: | | ເວັບໄຊ: | | | |
| ຊື່ ແລະນາມສະກຸນ ເພສັດສະກຳຂອງບໍລິສັດ: | | | | | |
| ເລກທີໃບຖະບຽນ ເພສັດສະກຳ ແລະ ວັນໝົດອາຍຸ: | | | | | |
| ກິດຈະການ (ສິນຄ້າ ແລະ ການບໍລິການ): ພາສາລາວ | | | | | |
| ກິດຈະການ (ສິນຄ້າ ແລະ ການບໍລິການ): ພາສາອັງກິດ | | | | | |
| ສິນຄ້າທີ່ທ່ານສົນໃຈ: | | | | | |
| ປະເພດກິດຈະກຳທີ່ທ່ານສົນໃຈ: | | | | | |
| ຫຼັກສູດຝຶກອົບຮົມທີ່ທ່ານສົນໃຈ: | | | | | |

**ໝາຍເຫດ:** ຄ່າທຳນຽມສະມາຊິກປະຈຳປີ: 1,000,000ກີບ (ໜຶ່ງລ້ານກີບ) ເລກບັນຊີ 099-12-20413748 ບັນຊີກີບທະນາຄານການຄ້າຕ່າງປະເທດເຊິ່ງບັນຊີຊື່ວຄາວຂອງສະມາຄົມ ມີ 3 ລາຍເຊັນສາມາດເຊັນ 2 ໃນ 3ລາຍເຊັນ.

ຂ້າພະເຈົ້າ ຍິນດີຈະປະຕິບັດຕາມກົດລະບຽບຂອງ ສະມາຄົມ ທຸລະກິດການຢາ ແລະ ຜະລິດຕະພັນການແພດ.

❖ <u>ເອກະສານປະກອບ ແລະ ຕິດຄັດ</u>

1. ແບບຟອມຂໍສະຫມັກເປັນສະມາຊິກ 1 ຊຸດ
2. ຮູບ ຂະຫນາດ 3x4 (ຮູບຖ່າຍບໍ່ເກີນ 1 ປີ) 2 ໃບ
3. ສຳເນົາ ທະບຽນວິສາຫະກິດ ຫນ້າ-ຫລັງ (ປີລ່າສຸດ)1 ຊຸດ

ນະຄອນຫລວງວຽງຈັນ, ວັນທີ.................

ເຊັນ ແລະ ປະທັບຕາ